ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທຄຕລ BCEL ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE

ສຳນັກງານໃຫຍ່ ເລກທີ 2772/ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 03 SEP 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບວ່າ ທຄຕລ ຕ້ອງການຈັດຊື້ເຄື່ອງຈັກປັ່ນໄຟ (Generator) ຈຳນວນ 05 ໜ່ວຍ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງທະນາຄານ, ດັ່ງນັ້ນ ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອຍື່ນຊອງປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | Generator_Cummins C55D5 55KVA (44KW), Engine 4BT3.3G2, Alternator UC224D, HMI Controller **Powerstart 600**, Monitoring under Power Command system<br>ATS:<br>Model: GTEC 125 Amp<br>Rated current: 125 Amp<br>Poles: 4<br>Category: IEC 60947-6-1 AC31A<br>Standards: IEEE C62.41 (B3) & C62.45<br>Control Voltage: Up to 480 V AC,<br>Frequency: 50 or 60 Hz<br>Trademark: Cummins Inc.<br>Specification: 125 Amp | **3** ໜ່ວຍ | ① ໜ່ວຍບໍລິການເມືອງພຽງ, ແຂວງໄຊຍະບູລີ<br>② ໜ່ວຍບໍລິການສະໜາມໄຊ ແຂວງອັດຕະປື<br>③ ໜ່ວຍບໍລິການໄຊສົມບູນ |
| 2 | Generator_Cummins C33D5 33KVA (26.4KW) Engine X 3.3 G1, Alternator PI144G, HMI Controller **Powerstart 600**, Monitoring under Power Command system<br>ATS:<br>Model: GTEC 63 Amp<br>Rated current: 63 Amp<br>Poles: 4<br>Category: IEC 60947-6-1 AC31A<br>Standards: IEEE C62.41 (B3) & C62.45<br>Control Voltage: Up to 480 V AC,<br>Frequency: 50 or 60 Hz<br>Trademark: Cummins Inc.<br>Specification: 63 Amp | **2** ໜ່ວຍ | ① ໜ່ວຍບໍລິການເມືອງງອຍ, ແຂວງຫຼວງພະບາງ<br>② ໜ່ວຍບໍລິການໜອງບົກ, ແຂວງຄຳມ່ວນ |

❖ **ໜ້າວຽກ ແລະ ມາດຖານຂອງບໍລິສັດທີ່ຈະເຂົ້າຮ່ວມປະມູນລາຄາມີດັ່ງນີ້:**

- ຕ້ອງເປັນບໍລິສັດທີ່ມີປະສົບການໃນການຕິດຕັ້ງຈັກປັ່ນໄຟ ແລະ ບຳລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການໃດໜຶ່ງຢ່າງໜ້ອຍ 3 ປີຂຶ້ນໄປ.

- ບໍລິສັດຕ້ອງມີໃບຢັ້ງຢືນການເປັນ Partner ກັບ Cummins ຢູ່ປະເທດລາວ.
- ຕ້ອງມີເອກະສານຢັ້ງຢືນການມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ຢ່າງໜ້ອຍ 1 ຄົນ ຂຶ້ນໄປ.
- ສິນຄ້າຕ້ອງເປັນຂອງແທ້ທີ່ໄດ້ມາດຕະຖານຈາກໂຮງງານຜູ້ຜະລິດ ແລະ ຮັບປະກັນສິນຄ້າ 1 ປີ ຂຶ້ນໄປ ແລະ ບໍລິສັດຕ້ອງເຂົ້າມາບຳລຸງຮັກສາ 1 ປີ (3 ຄັ້ງ) ຫຼັງການຕິດຕັ້ງສຳເລັດ.
- ຮັບຜິດຊອບຄ່າຂົນສົ່ງຮອດຈຸດຕິດຕັ້ງ ແລະ ຕິດຕັ້ງສຳເລັດພ້ອມໃຊ້ງານ, ລວມສາຍໄຟ, CB ແລະ ອຸປະກອນອື່ນໆຕາມມາດຕະຖານ (ຖານ ແລະ ເຮືອນຈັກ ແມ່ນ ທຄຕລ ຈັດກຽມໃຫ້).
- ເຕີມນ້ຳມັນເຊື້ອໄຟ 100 ລິດ.
- ມີການອົບຮົມດ້ານເຕັກນິກ-ການໃຊ້ງານ ໃຫ້ວິຊາການ ທຄຕລ.
- ພາຍຫຼັງສິ້ນສຸດສັນຍາ ທຄຕລ ຕ້ອງສາມາດ ເຂົ້າເຖິງຂໍ້ມູນເຄື່ອງຈັກ ໄດ້ຢ່າງຄົບຖ້ວນ.
- ບໍລິສັດສາມາດເຂົ້າສຳຫຼວດສະຖານທີ່ຕິດຕັ້ງຕົວຈິງ, ສອບຖາມຂໍ້ມູນເພີ່ມຕື່ມໄດ້ຕັ້ງແຕ່ມື້ນີ້ ຈົນເຖິງວັນສຸກ, ທີ 12/09/2025 ໃນໂມງລັດຖະການ.

**ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນລາຄາ ຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**

❖ **<u>ເອກະສານ ຊອງທີ 1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຫຼື ໄຟຟ້າ ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022-2024.
2. ເອກະສານລາຍລະອຽດສະເປັກ, ການຮັບປະກັນ, ໄລຍະເວລາຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ **ວັນຈັນ, ທີ 15/09/2025 ເວລາ 11:00 ໂມງ** ໂດຍການສົ່ງຟາຍ PDF ເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la <u>ເພື່ອໃຫ້ສູນໄອທີໄດ້ກວດສະເປັກ.</u>

❖ **<u>ເອກະສານ ຊອງທີ 2:</u> (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/11/2025)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. **ໃນວັນສຸກ, ທີ 26/09/2025 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍທັງໝົດໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 30 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ-ຕິດຕັ້ງສຳເລັດ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ສອບຖາມຂໍ້ມູນເພີ່ມຕື່ມ:

020 2334 4556

020 5533 4674

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: